


ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍຊາວໜຸ່ມ ທຫລ.ຊຂ ຈັດພິທີປາຖະກະຖາ
## ເລົ່າມູນເຊື້ອເນື່ອງໃນວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 66 ປີ




ໜ່ວຍຊາວໜຸ່ມທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ຈັດພິທີປາຖະກະຖາ ເລົ່າມູນເຊື້ອເນື່ອງໃນວັນສ້າງຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 66 ປີ **(14/04/1955 – 14/04/2021)** ຂຶ້ນໃນວັນທີ **25** ມີນາ **2021** ທີ່ຫ້ອງປະຊຸມ ທຫລ.ຊຂ ໂດຍໃຫ້ກຽດເປັນປະທານຂອງ ສະຫາຍ ວິສອນ ໄຊສົງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ທັງເປັນຜູ້ຊີ້ນໍາວຽກງານສາມອົງການຈັດຕັ້ງມະຫາຊົນ ທຫລ.ຊຂ, ມີຄະນະສາຂາ, ຄະນະພະແນກ, ຕາງໜ້າໜ່ວຍກໍາມະບານ, ໜ່ວຍແມ່ຍິງ ແແລະ ສະມາຊິກຊາວໜຸ່ມ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ອານຸສອນ ຫຼວງປັນຍາ ຄະນະໜ່ວຍຊາວໜຸ່ມ ໄດ້ຂຶ້ນຜ່ານບົດສະຫຼຸບຜົນການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມ ທຫລ.ຊຂ ໃນໄລຍະ 01 ໄຕມາດທີ່ຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

ຫຼັງຈາກນັ້ນ, ສະຫາຍ ນາງ ຈັນສະໝອນ ຈັນທິວົງ ຮອງເລຂາ, ປະທານກວດກາໜ່ວຍຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ເລົ່າປະຫວັດມູນເຊື້ອປະຫວັດຄວາມເປັນມາຂອງຊາວໜຸ່ມປະຊາຊົນປະຕິວັດລາວ, ພ້ອມທັງໄດ້ເລົ່າເຖິງຜົນງານໂດດເດັ່ນປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງຊາວໜຸ່ມປະຊາຊົນປະຕິວັດລາວ, ການປະກອບສ່ວນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ, ການກໍ່ສ້າງເສດຖະກິດ, ວັດທະນະທໍາສັງຄົມ ແລະ ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສືບຕໍ່ປະຕິບັດຄໍາຂວັນ "ບ່ອນໃດຍາກຊາວໜຸ່ມບຸກ ບ່ອນໃດທຸກຊາວໜຸ່ມຜ່ານຜ່າ ບ່ອນໃດຊາດຕ້ອງການຊາວໜຸ່ມຂານອາສາ".



ໃນຕອນທ້າຍ ປະທານ ຍັງໄດ້ເນັ້ນໜັກແຕ່ລະຈຸດທີ່ສໍາຄັນກ່ຽວກັບ ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມໃນໄລຍະຜ່ານມາ ໂດຍໄດ້ຍົກໃຫ້ເຫັນບັນຫາ ແລະ ຜົນງານທີ່ຍາດມາໄດ້, ທັງໝົດນັ້ນໄດ້ປະກອບສ່ວນເປັນອັນສໍາຄັນໃຫ້ແກ່ຜົນສໍາເລັດຂອງວຽກງານ ທຫລ.ຊຂ ໃນໄລຍະຜ່ານມາ, ຮຽກຮ້ອງໃຫ້ສະມາຊິກຊາວໜຸ່ມທຸກສະຫາຍຈະຕ້ອງໄດ້ປັບປຸງແກ້ໄຂຂໍ້ຄົງຄ້າງຂອງການປະຕິບັດວຽກງານ ໃຫ້ມີຜົນສໍາເລັດເປັນກ້າວໆ, ພ້ອມທັງຮ່ວມກັນອອກແຮງແຂ່ງຂັນປະຕິບັດເນື້ອໃນຂໍ້ແຂ່ງ ຂັນ 4 ບຸກ ໃຫ້ປະກົດຜົນເປັນຈິງ, ຝຶກຝົນຫຼໍ່ຫຼອມຕົນເອງ, ມີຄຸນສົມບັດສິນທໍາປະຕິວັດ, ພ້ອມທັງເພີ່ມທະວີຮັດແໜ້ນຄວາມສາມັກຄີທັງພາຍໃນ ແລະ ພາຍນອກໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ.

**ຂ່າວ: ສຸກສະຫວັນ ພົມມະວົງ**

**ຮັກຊາດຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບລາວ**